**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງອຸດສາຫະກຳ ແລະ ການຄ້າ

ກອງທຶນສົ່ງເສີມ ຈບນກ

ເລກທີ 0139/ທສວ

ນະຄອນຫຼວງວຽງຈັນ, ວັນທີ 12 ກຸມພາ 2025

# ໜັງສືແຈ້ງເຊີນຍື່ນເຈດຈຳນົງຄວາມສົນໃຈ
# ສຳລັບການບໍລິການ ປະເມີນການສະໜອງສິນເຊື່ອ, ການສະໜອງທຶນ ໂຄງການວິຊາການ ແລະ ການຄຸ້ມຄອງ-ບໍລິຫານ ຂອງ ທສວ ໄລຍະ ປີ 2011-2024

1. ກອງທຶນສົ່ງເສີມຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ (ທສວ), ກະຊວງອຸດສາຫະກຳ ແລະ ການຄ້າ ໄດ້ຮັບອະນຸມັດງົບປະມານ ປະຈຳປີ 2025 ຂອງ ທສວ ເພື່ອຈັດຈ້າງບໍລິສັດທີ່ປຶກສາ *[ສະໜອງບໍລິການ ປະເມີນການສະໜອງສິນເຊື່ອ, ການສະໜອງທຶນໂຄງການວິຊາການ ແລະ ການຄຸ້ມຄອງ-ບໍລິຫານ ຂອງ ທສວ ໄລຍະ ປີ 2011-2024];*
2. ສຳລັບໜ້າວຽກທີ່ຈະມອບໝາຍ (TOR) ລາຍລະອຽດ ສາມາດພົວພັນເອົາເອກະສານໄດ້ຢູ່ທີ່ຊັ້ນ 03 ຫ້ອງ 301 ຂອງຫ້ອງການສຳນັກງານສົ່ງເສີມຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ, ກະຊວງອຸດສາຫະກຳ ແລະ ການຄ້າ, ເບີໂທ 021 410005, 020 2309 8876;
3. ທສວ ຂໍເຊີນບໍລິສັດທີ່ປຶກສາ " ທີ່ປຶກສາ" ທີ່ມີຄວາມສົນໃຈ ຍື່ນໜັງສືສະແດງຄວາມສົນໃຈຂອງຕົນ ເພື່ອສະໜອງການບໍລິການດັ່ງກ່າວ. ບໍລິສັດທີ່ມີຄວາມສົນໃຈ ຕ້ອງສະໜອງຂໍ້ມູນທີ່ສະແດງເຖິງຄວາມເໝາະສົມໃນການສະໜອງການບໍລິການ ທີ່ມີຄຸນວຸດທິ ແລະ ມີປະສົບການທີ່ກ່ຽວຂ້ອງ ໃນການປະຕິບັດການບໍລິການດັ່ງກ່າວ. ມາດຖານການຄັດເລືອກບໍລິສັດເຂົ້າໃນບັນຊີຄັດເລືອກ (ບັນຊີສັ້ນ) ສຳລັບການບໍລິການ ມີດັ່ງນີ້:
   - ຕ້ອງເປັນບໍລິສັດ ທີ່ຖືກຕ້ອງຕາມກົດໝາຍໃນການດຳເນີນງານ ກ່ຽວກັບການບໍລິການທີ່ປຶກສາ (ໃບອະນຸຍາດດຳເນີນທຸລະກິດ) ເປັນບໍລິສັດເອກະລາດ ສຳລັບວຽກງານການບໍລິການທີ່ກ່ຽວຂ້ອງ;
   - ຕ້ອງມີໃບຢັ້ງຢືນການເສຍອາກອນ ປະຈຳປີ 2024 ຫຼື 2023;
   - ມີຊ່ຽວຊານ ຫຼື ບຸກຄະລາກອນ ທີ່ມີປະສົບການໃນການປະເມີນຜົນ ການສຳຫຼວດດ້ານເສດຖະກິດ, ການເຂົ້າເຖິງແຫຼ່ງທຶນມາກ່ອນ ຢ່າງໜ້ອຍ 05 ປີ ແລະ ມີບຸກຄະລາກອນ ທີ່ພຽງພໍຕໍ່ການດຳເນີນງານໃນຄັ້ງ;
   - ຊ່ຽວຊານ ຫຼື ຫົວໜ້າທີມງານ ແລະ ທີມງານວິຊາການຜູ້ຊ່ວຍວຽກຕ້ອງຈົບລະດັບປາລິນຍາຕີ ຂຶ້ນໄປ;
   - ມີປະສົບການສະເພາະດ້ານຢ່າງໜ້ອຍ 05 ປີ ກ່ຽວກັບການບໍລິການທີ່ຄ້າຍຄືກັນ ພ້ອມທັງສະແດງຫຼັກຖານຄວາມສຳເລັດໃນການບໍລິການທີ່ປຶກສາຢ່າງໜ້ອຍ 05 ສັນຍາ ທີ່ພົວພັນກັບ *[ການສຳຫຼວດດ້ານເສດຖະກິດ, ການເຂົ້າເຖິງແຫຼ່ງທຶນມາກ່ອນ]* ໂດຍສະເພາະການບໍລິການທີ່ປຶກສາພາຍໃນປະເທດ ຫລື ໃນບັນດາກະຊວງຕ່າງໆ;
   - ສະໜອງໂຄງຮ່າງການຈັດຕັ້ງ ແລະ ບັນຊີລາຍຊື່, ຊີວະປະຫວັດຂອງຜູ້ຊ່ຽວຊານ ຫຼື ຫົວໜ້າທີມງານ ແລະ ພະນັກງານຫຼັກ ເພື່ອເປັນຂໍ້ມູນໃນການຂະບວນການຄັດເລືອກເຂົ້າໃນບັນຊີຄັດເລືອກ (ບັນຊີສັ້ນ).

5. ບໍລິສັດທີ່ປຶກສາຈະຖືກຄັດເລືອກຕາມຮູບແບບຈັດຈ້າງ *[ສະເພາະຄຸນນະພາບ (QBS)]* ຕາມຫຼັກການຈັດຊື້-ຈັດຈ້າງ ສໍາລັບງົບປະມານຂອງລັດ ທີ່ກໍານົດໄວ້ໃນບົດແນະນໍາການຈັດຕັ້ງປະຕິບັດກົດຫມາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019;
6. ບໍລິສັດທີ່ປຶກສາທີ່ມີຄວາມສົນໃຈສາມາດຕິດຕໍ່ພົວພັນເອົາຂໍ້ມູນກ່ຽວກັບ *[ການສະໜອງບໍລິການ ປະເມີນການສະໜອງສິນເຊື່ອ, ການສະໜອງທຶນໂຄງການວິຊາການ ແລະ ການຄຸ້ມຄອງ-ບໍລິຫານ ຂອງ ທສວ ໄລຍະ ປີ 2011-2024]* ດັ່ງກ່າວນີ້ ໄດ້ຕາມທີ່ຢູ່ຂ້າງລຸ່ມນີ້ໃນໂມງລັດຖະການ (8:30 ໂມງ ຫາ 16:00 ໂມງ), ວັນຈັນ ເຖິງ ວັນສຸກ;
7. ເອກະສານການສະແດງຄວາມສົນໃຈ ຕ້ອງສົ່ງເຖິງທີ່ຢູ່ຂ້າງລຸ່ມນີ້ ແລະ ປິດຮັບເອກະສານສະແດງຄວາມສົນໃຈ ໃນວັນທີ..19... ມິນາ 2025 ສົ່ງຢູ່ທີ່ຊັ້ນ 03, ຫ້ອງ 301 ຂອງສໍານັກງານສົ່ງເສີມຈຸນລະວິສາຫະກິດ ວິສາຫະກິດຂະໜາດນ້ອຍ ແລະ ກາງ, ກະຊວງອຸດສາຫະກໍາ ແລະ ການຄ້າ, ເບີໂທ 021 410005; 020 2309 8876.

**ຜູ້ອໍານວຍການກອງທຶນ**

ປອ. ບຸນເພັງ ສີບຸນເຮືອງ